# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ..................................................... 1

II. ການເຄື່ອນໄຫວຂອງ ຄະນະນໍາ ຄະນະພົວພັນຕ່າງປະເທດສູນກາງພັກ ..................................................... 5

III. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ຄຕພ ..................................................................... 10


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ກັນຍາ 2024


ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 16/9/2024, ໜັງສືພິມຂອງພັກກອມມູນິດຫວຽດນາມ ໄດ້ເຜີຍແຜ່ບົດຂຽນຂອງສະຫາຍ To Lam, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສສ.ຫວຽດນາມ ທີ່ມີຫົວຂໍ້ວ່າ *"ສືບຕໍ່ປະດິດສ້າງຢ່າງແຂງແຮງໃນການນໍາພາ ແລະ ວິທີການປົກຄອງຂອງພັກ, ແມ່ນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງໄລຍະການປະຕິວັດໃໝ່"*, ຊຶ່ງມີເນື້ອໃນ ບາງຕອນວ່າ: ຕ້ອງເຕົ້າໂຮມຄວາມຮັບຮູ້ເປັນເອກະພາບ, ປະຕິບັດແນວທາງນະໂຍບາຍ ແລະ ການນໍາພາຂອງພັກຢ່າງເຂັ້ມງວດ; ສຸມໃສ່ປັບປຸງກົນໄກ ແລະ ອົງການຈັດຕັ້ງພັກໃຫ້ກະທັດຮັດ, ແມ່ນທາດແທ້ປັນຍາຊົນ; ປະຕິບັດມະຕິຂອງພັກຢ່າງຮອບດ້ານ; ກໍ່ສ້າງບັນດາອົງການຈັດຕັ້ງພັກຮາກຖານ, ສະມາຊິກພັກໃຫ້ເປັນກໍາລັງຂອງພັກແທ້ຈິງ; ສືບຕໍ່ປະດິດສ້າງວຽກງານກວດກາ ແລະ ກວດກາ; ຍູ້ແຮງການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການຫັນເປັນດິຈິຕອນເຂົ້າໃນການເຄື່ອນໄຫວຂອງພັກ.

ວັນທີ 18/9/2024, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມສາມັນຄັ້ງທີ 10 ເພື່ອປຶກສາຫາລື ບາງບັນຫາສະເພາະ ຂອງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ; ການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ 13 ຂອງພັກໃຫ້ສໍາເລັດຜົນໃນປີ 2025; ການປະຕິບັດເປົ້າໝາຍຍຸດທະສາດ 100 ປີ ແລະ ວັນສະຖາປະນາປະເທດຄົບຮອບ 100 ປີ. ສໍາລັບການກະກຽມໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ 14 ຂອງພັກ ຕ້ອງເອົາໃຈໃສ່ 5 ບັນຫາຄື: ບົດລາຍງານການເມືອງ; ບົດສະຫຼຸບ 40 ປີ ແຫ່ງການປ່ຽນແປງຂອງຫວຽດນາມ; ບົດລາຍງານການພັດທະນາເສດຖະກິດ-ສັງຄົມ; ການກະກຽມບຸກຄະລາກອນໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ 14; ວຽກງານກໍ່ສ້າງພັກ ແລະ ການປັບປຸງກົດລະບຽບພັກ.

ວັນທີ 21/9/2024, ຄະນະລັດຖະບານຫວຽດນາມ ໄດ້ປະຊຸມຮ່ວມກັບບັນດາວິສາຫະກິດຈໍານວນໜຶ່ງ. ກອງປະຊຸມໄດ້ລາຍງານວ່າ: ປັດຈຸບັນ, ເສດຖະກິດເອກະຊົນປະກອບສ່ວນ 45% ຂອງ GDP, 40% ຍອດຈໍານວນທຶນລົງທຶນ, ສ້າງວຽກເຮັດງານທໍາໄດ້ 85% ຂອງຈໍານວນຄົນງານ, ກວມເອົາ 35% ຍອດມູນຄ່າການນໍາເຂົ້າ ແລະ 25% ຂອງມູນຄ່າການສົ່ງອອກ. ບັນດາວິສາຫະກິດເອກະຊົນຂອງຫວຽດນາມ ໃນພາກພື້ນ ແລະ ໃນໂລກມີຈໍານວນ 930.000 ກວ່າແຫ່ງ, ໃນນັ້ນ 98% ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສະຫະກອນປະມານ 14.400 ແຫ່ງ ແລະ ມີນັກທຸລະກິດ 5 ລ້ານກວ່າຄອບຄົວ. ປັດຈຸບັນ ຂະໜາດ GDP ຂອງຫວຽດນາມ ຢູ່ອັນດັບ 34 ຂອງໂລກ ແລະ ຈະສູ້ຊົນບໍ່ໃຫ້ມີຄອບຄົວທຸກຍາກໃນປີ 2030; ທ່ານ ນາຍົກລັດຖະມົນຕີ ໄດ້ສະເໜີໃຫ້ວິສາຫະກິດບຸກທະລຸ 6 ຢ່າງຄື: 1).ການຊຸກຍູ້ ແລະ ນໍາໃຊ້ວິທະຍາສາດເຕັກໂນໂລຢີ ແລະ ນະວັດຕະກໍາ, ຕອບສະໜອງການປ່ຽນແປງຂອງດິນຟ້າອາກາດ; 2).ການເຂົ້າຮ່ວມຂອງຕ່ອງໂສ້ມູນຄ່າ, ຕ່ອງໂສ້ການຜະລິດ, ຕ່ອງໂສ້ການສະໜອງໃນທົ່ວໂລກ, ປະກອບສ່ວນສ້າງເຄື່ອງໝາຍຂອງວິສາຫະກິດ ແລະ ຍີ່ຫໍ້ແຫ່ງຊາດ; 3).ສ້າງວຽກເຮັດງານທໍາ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ຮັບປະກັນຊີວິດສັງຄົມ; 4).ການພັດທະນາພື້ນຖານໂຄງລ່າງລວມທັງໂຄງລ່າງດິຈິຕອນ; 5).ສ້າງແຫຼ່ງຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ; 6).ນໍ້າໃຈສາມັກຄີ, ສະໜັບສະໜູນເຊິ່ງກັນ ແລະ ກັນ, ວິສາຫະກິດຂະໜາດໃຫຍ່ຊ່ວຍວິສາຫະກິດຂະໜາດນ້ອຍ, ກາງ ຮ່ວມກັນພັດທະນາປະເທດຊາດພ້ອມກັນ.

### 2) ພັກກອມມູນິດຈີນ

ວັນທີ 2/9/024, ການນໍາສູງສຸດຂອງຈີນ ພົບປະການນໍາຂັ້ນສູງຂອງ ອາຟຣິກາໃຕ້ ທີ່ປັກກິ່ງ, ສອງຝ່າຍ ເຫັນດີຍົກລະດັບສາຍພົວພັນ ລະຫວ່າງຈີນ ແລະ ອາຟຣິກາໃຕ້ ຂຶ້ນເປັນສາຍພົວພັນຄູ່ຮ່ວມມືຍຸດທະສາດຄົບວົງຈອນໃນຍຸກໃໝ່ ໂດຍຈະສຸມໃສ່ການຮ່ວມມືສາມທິດທາງ ຄື: ① ທິດທາງການເມືອງທີ່ກ້າວໜ້າຮ່ວມກັນ, ນໍາພາສາຍພົວພັນລະຫວ່າງສອງປະເທດດ້ວຍຄວາມໄວ້ເນື້ອເຊື່ອໃຈກັນລະດັບສູງ ເພື່ອກ້າວເດີນໄປຂ້າງໜ້າດ້ວຍບາດກ້າວໃຫຍ່; ② ທິດທາງການຮ່ວມມືແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ຮ່ວມກັນສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" ດ້ວຍຄຸນນະພາບສູງ, ຊຸກຍູ້ການຮ່ວມມືໃນຂົງເຂດຕ່າງໆ ເຊັ່ນ: ເສດຖະກິດດິຈິຕອນ, ປັນຍາປະດິດ ແລະ ພະລັງງານໃໝ່ເປັນຕົ້ນ; ③ ທິດທາງຈິດໃຈ

ຂອງປະຊາຊົນ ທີ່ມີໄມຕີຈິດມິດຕະພາບຕໍ່ກັນໄປທຸກເຊັ່ນຄົນ, ເພີ່ມທະວີການແລກປ່ຽນ ແລະ ຮ່ວມມືໃນການພັດທະນາ ຊັບພະຍາກອນມະນຸດ, ເລັ່ງລັດຊຸກຍູ້ການດໍາເນີນໂຄງການໂຮງງານສາທິດອາຊີວະສຶກສາ ແລະ ສູນອົບຮົມວິຊາຊີບ, ໃຫ້ທຶນການສຶກສາ ແລະ ໂອກາດການສຶກສາຕໍ່-ການອົບຮົມແກ່ຊາວໜຸ່ມອາຟຣິກາກາໃດ້ ຫຼາຍກວ່າເກົ່າ.

ໃນລະຫວ່າງວັນທີ 4-6/9/2024, ກອງປະຊຸມສຸດຍອດເວທີປຶກສາຫາລືການຮ່ວມມືຈີນ-ອາຟຣິກາກາ (Forum on China-Africa Cooperation : FOCAC) ຄັ້ງທີ 9 ທີ່ປັກກິ່ງ ສປ ຈີນ, ມີຜູ້ນໍາ ແລະ ຜູ້ຕາງໜ້າ 53 ປະເທດໃນທະວີບອາຟຣິກາກາເຂົ້າຮ່ວມ. ກອງປະຊຸມຄັ້ງນີ້, ຝ່າຍຈີນຈະໃຫ້ການສະໜັບສະໜູນດ້ານການເງິນແກ່ອາຟຣິກາກາ 360 ຕື້ຢວນ (50,7 ຕື້ໂດລາສະຫະລັດ) ໃນສາມປີຕໍ່ໜ້າ ໂດຍເນັ້ນການສ້າງໂຄງລ່າງພື້ນຖານທາງທະເລ ແລະ ການສ້າງທາງລົດໄຟ. ກອງປະຊຸມເຫັນດີຮ່ວມມືກັນໃນການຫັນເປັນທັນສະໄໝ, ເປັນທໍາ, ເປີດກວ້າງ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ເປັນມິດກັບສິ່ງແວດລ້ອມ, ມີຄວາມຫຼາກຫຼາຍ, ສັນຕິພາບ ແລະ ຄວາມປອດໄພ; ລະບົບຕ່ອງໂສ້ອຸດສາຫະກໍາ; ການພັດທະນາສີຂຽວ ແລະ ຄວາມໝັ້ນຄົງ. ກອງປະຊຸມສຸດຍອດ FOCAC ໄດ້ຈັດຂຶ້ນທຸກໆ 3 ປີ ນັບແຕ່ປີ 2000 ເປັນຕົ້ນມາ.

ໃນລະຫວ່າງວັນທີ 24-28/9/2024 ທີ່ ໜານໜິງ, ສປ.ຈີນ ໄດ້ຈັດງານວາງສະແດງສິນຄ້າຈີນ-ອາຊຽນ ຄັ້ງທີ 21 ພາຍໃຕ້ຫົວຂໍ້ "ພັດທະນາຮ່ວມກັນແບບເປັນເພື່ອນມິດທີ່ມີຄວາມສະໜິດສະໜົມກັນ, ມີຄວາມຈິງໃຈຕໍ່ກັນ, ໃຫ້ຜົນປະໂຫຍດແກ່ກັນ ແລະ ມີຄວາມໂອບເອື້ອອາລີຕໍ່ກັນ ເພື່ອສ້າງອະນາຄົດທີ່ດີງາມ: ຊຸກຍູ້ການສ້າງເຂດການຄ້າເສລີຈີນ-ອາຊຽນ 3.0 ແລະ ການເຕີບໂຕຢ່າງມີຄຸນນະພາບສູງໃນພາກພື້ນ", ເຊິ່ງມີຜູ້ນໍາຈີນ ແລະ ຕ່າງປະເທດ, ເຈົ້າໜ້າທີ່ລັດຖະບານ, ທູຕານຸທູດປະເທດສະມາຊິກອາຊຽນປະຈໍາຈີນ, ມີຜູ້ຕາງໜ້າພາກສ່ວນຕ່າງໆ 1.100 ກວ່າທ່ານ ເຂົ້າຮ່ວມ. ໃນງານດັ່ງກ່າວໄດ້ມີພິທີເຊັນສັນຍາ 109 ໂຄງການ. ໃນນັ້ນ, ມີໂຄງການຮ່ວມມືເສດຖະກິດການຄ້າສາກົນ 16 ໂຄງການ, ທີ່ກ່ຽວພັນເຖິງຫຼາຍປະເທດສະມາຊິກອາຊຽນ. ໃນງານວາງສະແດງດັ່ງກ່າວໄດ້ສະແດງໃຫ້ເຫັນມູນຄ່າການຄ້າລະຫວ່າງກວາງຊີກັບອາຊຽນ ໃນ 8 ເດືອນ ຂອງປີ 2024 ມີ 244,13 ຕື້ຢວນ, ເພີ່ມຂຶ້ນ 21,8% ເມື່ອທຽບໃສ່ ປີ 2023, ກວມເອົາຍອດມູນຄ່າການຄ້າຕ່າງປະເທດຂອງເຂດກວາງຊີ 52,6% ໃນໄລຍະດຽວກັນ, ອາຊຽນແມ່ນຄູ່ການຄ້າໃຫຍ່ອັນດັບໜຶ່ງຂອງເຂດກວາງຊີ ແລະ ຍອດມູນຄ່າການຄ້າສອງຝ່າຍລະຫວ່າງຈີນ-ອາຊຽນໄດ້ເພີ່ມຈາກ 876 ຕື້ 380 ລ້ານຢວນ ໃນ ປີ 2004 ຂຶ້ນເປັນ 6,410 ຕື້ຢວນ ໃນປີ 2023.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ວັນທີ 30/8/2024, ທ່ານ ນາງ ແພທອງທານ ຊິນນະວັດ, ນາຍົກລັດຖະມົນຕີໄທ ຄົນໃໝ່ ໄດ້ປະກາດຈັດຕັ້ງລັດຖະບານຊຸດໃໝ່ ຊຶ່ງມີລາຍຊື່ຄະນະລັດຖະມົນຕີ ທັງໝົດ 35 ທ່ານ (ໃນນັ້ນ ມີ 6 ທ່ານ ທີ່ຄອບຕໍາແໜ່ງຮອງນາຍົກລັດຖະມົນຕີ) ຄື: ຈາກພັກເພື່ອໄທ 17 ທ່ານ, ພັກພູມໃຈໄທ 8 ທ່ານ, ພັກລວມໄທສ້າງຊາດ 4 ທ່ານ, ພັກປະຊາທິປັດ 2 ທ່ານ, ພັກໄທພັດທະນາ 1 ທ່ານ, ພັກປະຊາຊາດ 1 ທ່ານ ແລະ ມີສະມາຊິກສະພາກຸ່ມຂອງທ່ານ ທໍາມະນັດ ພົມເຜົ່າ 3 ທ່ານ. ແລະ ໃນວັນທີ 7/9/2024, ສະພາຕໍ່າໄທ ໄດ້ເຜີຍແຜ່ນະໂຍບາຍຂອງຄະນະລັດຖະບານຊຸດໃໝ່ ຊຶ່ງມີ 10 ຂໍ້ ສໍາຄັນ ດັ່ງນີ້: 1).ລັດຖະບານຈະຊຸກຍູ້ໃຫ້ເກີດການປັບໂຄງສ້າງໜີ້ ກຸ່ມສິນເຊື່ອເຮືອນ ແລະ ລົດ ເພື່ອຊ່ວຍເຫຼືອລູກໜີ້ທັງໃນ ແລະ ນອກລະບົບ; 2).ຈະສົ່ງເສີມ ແລະ ປົກປ້ອງຜົນປະໂຫຍດຂອງຜູ້ປະກອບການ; 3).ອອກມາດຕະການເພື່ອຫຼຸດລາຄາພະລັງງານ; 4).ຈະນໍາເອົາທຸລະກິດນອກລະບົບພາສີ ແລະ ທຸລະກິດເຖື່ອນເຂົ້າສູ່ລະບົບພາສີ; 5).ກະຕຸ້ນເສດຖະກິດ ຄຽງຄູ່ກັບການຫຼຸດພາລະຄ່າໃຊ້ຈ່າຍ ແລະ ເພີ່ມໂອກາດໃນການປະກອບອາຊີບ; 6).ຈະຍົກລະດັບການກະສິກໍາລະບົບດັ້ງເດີມໃຫ້ເປັນລະບົບທັນສະໄໝ; 7).ຈະສົ່ງເສີມການທ່ອງທ່ຽວ; 8).ແກ້ໄຂບັນຫາຢາເສບຕິດຢ່າງເດັດຂາດ ແລະ ຄົບວົງຈອນ; 9).ແກ້ໄຂບັນຫາອາຊະຍາກໍາອອນລາຍ ແລະ ອາຊະຍາກໍາຂ້າມຊາດ; 10).ຈະສົ່ງເສີມພັດທະນາທ່າແຮງ ແລະ ຈັດສະຫວັດດີການໃຫ້ສອດຄ່ອງກັບສະພາບສັງຄົມທີ່ປ່ຽນແປງໄປ.

ວັນທີ 2-3/9/2024, ປະທານາທິບໍດີຣັດເຊຍ ໄດ້ຢ້ຽມຢາມມົງໂກນ ຢ່າງເປັນທາງການ, ໃນໂອກາດ ຄົບຮອບ 5 ປີ ຂອງການພົວພັນມິດຕະພາບ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານຂອງສອງປະເທດ. ສອງຝ່າຍເຫັນດີເພີ່ມທະວີການຮ່ວມມືດ້ານເສດຖະກິດ, ການຊື້ຂາຍນໍ້າມັນເຊື້ອໄຟ, ພະລັງງານອື່ນໆ, ດ້ານຄົມມະນາຄົມ, ສິ່ງແວດລ້ອມ, ວັດທະນະທໍາ, ການສຶກສາ, ສາທາລະນະສຸກ ແລະ ມະນຸດສະທໍາ; ເຫັນດີເລັ່ງລັດສ້າງແລວເສດຖະກິດມົງໂກລີ-ຣັດ

ເຊຍ-ຈີນ ໂດຍການເລີ່ມກໍ່ສ້າງທໍ່ສົ່ງອາຍແກັສທຳມະຊາດໃໝ່ (Power of Siberia 2) ໃນປີ 2029 ທີ່ເຊື່ອມຕໍ່ຈາກຣັດເຊຍ ຜ່ານ ມົງໂກລີ ໄປຍັງຈີນ, ຖ້າສ້າງສຳເລັດ ຈະສາມາດສະໜອງອາຍແກັສຈາກຣັດເຊຍ ໃຫ້ຈີນ ບັນລຸ 50 ຕື້ແມັດກ້ອນຕໍ່ປີ (ສຳລັບໂຄງການ Power of Siberia1 ຂອງ 3 ປະເທດ ໄດ້ສ້າງຂຶ້ນແຕ່ປີ 2014 ແລະ ຈະເປີດການນຳໃຊ້ໃນປີ 2027) ແລະ ໄດ້ລົງນາມເອກະສານ 5 ສະບັບ.

ວັນທີ 13/9/2024, ຈີນ ແລະ ບັນດາປະເທດສະມາຊິກອາຊຽນ ໄດ້ຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສ ຄັ້ງທີ 22 ກ່ຽວກັບການຜັນຂະຫຍາຍ "ຖະແຫຼງການວ່າດ້ວຍການປະພຶດຂອງບັນດາຝ່າຍຢູ່ທະເລຈີນໃຕ້" ຢູ່ນະຄອນຊື່ອ່ານ ແຂວງສານຊີ່, ສປ ຈີນ. ກອງປະຊຸມເປັນເອກະພາບກັນວ່າ: ການປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຢູ່ທະເລຈີນໃຕ້ ມີຄວາມໝາຍທີ່ສຳຄັນ, ຮຽກຮ້ອງໃຫ້ຝ່າຍຕ່າງໆເພີ່ມທະວີການສົນທະນາກັນ, ຮັກສາຄວາມອົດກັ້ນ, ແກ້ໄຂຄວາມຂັດແຍ້ງຢ່າງເໝາະສົມ, ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈກັນ, ປົກປັກຮັກສາຄວາມໝັ້ນຄົງທາງທະເລ; ເຫັນດີສືບຕໍ່ຜັນຂະຫຍາຍຖະແຫຼງການດັ່ງກ່າວຢ່າງຮອບດ້ານ ແລະ ເປັນຮູບປະທຳ, ລົງເລິກການຮ່ວມມືໃນຂົງເຂດຕ່າງໆເຊັ່ນ: ການອະນຸລັກສິ່ງແວດລ້ອມທາງທະເລ, ການຄົ້ນຄວ້າວິທະຍາສາດທາງທະເລ ແລະ ອື່ນໆ, ເຫັນດີເລັ່ງລັດການປຶກສາຫາລືດ້ວຍຮູບການທີ່ຄ່ອງແຄ້ວ ແລະ ມີຫົວຄິດປະດິດສ້າງ, ພະຍາຍາມໃຫ້ບັນລຸ "ກົດແຫ່ງການປະພຶດຂອງບັນດາຝ່າຍຢູ່ທະເລຈີນໃຕ້" ໂດຍໄວເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມື.

ໃນວັນທີ 25/9/2024, ກອງກຳລັງລູກສອນໄຟແຫ່ງກອງທັບປົດປ່ອຍປະຊາຊົນຈີນ ໄດ້ຍິງທົດສອບລູກສອນໄຟນຳວິຖີຂ້າມທະວີບທີ່ຕິດຫົວລະເບີດຈຳລອງລູກໜຶ່ງຕົກໃສ່ເຂດນ່ານນ້ຳມະຫາສະໝຸດປາຊີຟິກ. ເປັນການທົດລອງຕາມປົກກະຕິໂດຍອີງຕາມແຜນການຝຶກຊ້ອມດ້ານການທະຫານປະຈຳປີຂອງກອງກຳລັງລູກສອນໄຟແຫ່ງກອງທັບປົດປ່ອຍປະຊາຊົນຈີນ ເພື່ອປະເມີນປະສິດທິພາບຂອງອາວຸດຍຸດໂທປະກອນກໍຄືລະດັບການຝຶກຊ້ອມຂອງກອງທັບ. ກ່ອນຍິງລູກສອນໄຟນຳວິຖີເທື່ອນີ້, ຈີນ ໄດ້ແຈ້ງໃຫ້ບັນດາປະເທດໃນພາກພື້ນດັ່ງກ່າວຮັບຊາບລ່ວງໜ້າ.

ວັນທີ 8/9/2024, ກອງທັບ ສ.ເກົາຫຼີ ໄດ້ລາຍງານວ່າ ສປປ ເກົາຫຼີ ໄດ້ສົ່ງ balloon ບັນຈຸຂີ້ເຫຍື້ອຫຼາຍກວ່າ 200 ລູກ ເປັນຄັ້ງທີ່ 17 ເຂົ້າມາ ສ.ເກົາຫຼີ 5 ວັນ ຕິດຕໍ່ກັນ, ໃນນັ້ນ 50 ລູກ ໄດ້ລອຍເຂົ້າໄປເຂດນະຄອນຫຼວງເຊອູນ ແລະ ເຂດໃກ້ຄຽງ, ຊຶ່ງກອງທັບ ສ.ເກົາຫຼີ ຈະຕອບໂຕ້ຄືນ. ໃນວັນທີ 10/9/2024, ສະຫາຍ ກິມເຈິງອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ກ່າວວ່າ: ຈະເພີ່ມປະສິດທິພາບດ້ານນິວເຄຼຍ ເພື່ອປ້ອງກັນໄພຂົ່ມຂູ່ຈາກສັດຕູ ແລະ ການເຄື່ອນໄຫວ ໃນການຂະຫຍາຍກຳລັງທະຫານໃນພາກພື້ນ ທີ່ນຳໂດຍ ສ. ອາເມຣິກາ. ພ້ອມນີ້, ກໍ່ໄດ້ເນັ້ນໜັກເຖິງ ຄວາມຈຳເປັນໃນການສ້າງທ່າເຮືອສຳລັບກອງທັບ ທີ່ສາມາດນຳໃຊ້ລະບົບອາວຸດຂອງເຮືອຮົບໄດ້ ແລະ ມາດຕະການທາງທະຫານໃນການຕິດຕັ້ງລະບົບຕໍ່ຕ້ານທາງອາກາດ ແລະ ລະບົບປ້ອງກັນແຄມຝັ່ງ.

ວັນທີ 16/9/2024, ທາງການຊູແອັດ (Sweden) ໄດ້ປະກາດຈະປິດ ສະຖານທູດຊູແອັດ ປະຈຳນະຄອນຫຼວງພະນົມເປັນ, ຣາຊະອານາຈັກກຳປູເຈຍ ໂດຍໃຫ້ເຫດຜົນວ່າ: ລັດຖະບານກຳປູເຈຍ ກະທຳການລະເມີດຫຼັກການປະຊາທິປະໄຕ ແລະ ລະເມີດສິດທິມະນຸດຢ່າງຕໍ່ເນື່ອງ, ໄດ້ຈັບກຸມນັກການເມືອງ ແລະ ຊາວໜຸ່ມກຳປູເຈຍ ແລະ ຈະຢຸດເຮັດວຽກ ແຕ່ວັນທີ 30/9/2024 ເປັນຕົ້ນໄປ. ສະຖານທູດຊູແອັດປະຈຳບາງກອກ, ຣາຊະອານາຈັກໄທ ຈະຕາງໜ້າວ່າການວຽກງານການທູດຂອງຕົນຢູ່ກຳປູເຈຍແທນ. ສ່ວນກຳປູເຈຍ ໄດ້ປະກາດປິດສະຖານທູດຂອງຕົນໃນຊູແອັດ ເຊັ່ນດຽວກັນ. ໃນວັນທີ 21/9/2024, ກຳປູເຈຍ ໄດ້ຕັດສິນໃຈຖອນຕົວອອກຈາກຂໍ້ລິເລີ່ມເຂດສາມຫຼ່ຽມພັດທະນາກຳປູເຈຍ-ລາວ-ຫວຽດນາມ (Cambodia-Laos-Vietnam Development Triangle Area: CLV-DTA), ມີຜົນແຕ່ວັນທີ 20/9/2024 ເປັນຕົ້ນໄປ. ຍ້ອນກຸ່ມຝ່າຍຄ້ານຫົວຮຸນແຮງໄດ້ໃຊ້ຂໍ້ລິເລີ່ມດັ່ງກ່າວເປັນຂໍ້ອ້າງເພື່ອໃສ່ຮ້າຍປ້າຍສີ ແລະ ໂຈມຕີລັດຖະບານ, ໂດຍກ່າວຫາວ່າລັດຖະບານກຳປູເຈຍ ໄດ້ມອບດິນແດນຂອງ 4 ແຂວງພາກຕາເວັນອອກສຽງເໜືອ ໃຫ້ແກ່ຫວຽດນາມ ຊຶ່ງບໍ່ມີມູນຄວາມຈິງແຕ່ຢ່າງໃດ. ເພື່ອປ້ອງກັນຄວາມສະຫງົບຢູ່ພາຍໃນປະເທດ ແລະ ຮັກສາໄດ້ຄວາມເປັນເພື່ອນມິດກັບຕ່າງປະເທດ, ລັດຖະສະພາ ກຳປູເຈຍ ຈຳເປັນຕ້ອງ ຖອນຕົວອອກຈາກ CLV-DTA ແລະ ໄດ້ສົ່ງຈົດໝາຍທາງການເຖິງລັດຖະບານລາວ ແລະ ຫວຽດນາມ ຊາບຢ່າງເປັນທາງການແລ້ວ.

## 2) ສະພາບການເອີຣົບ-ອາເມຣິກາ

ໃນວັນທີ 3-6/09/2024 ກອງປະຊຸມເສດຖະກິດຕາເວັນອອກ (Eastern Economic Forum: EEF) ຄັ້ງທີ 9 ໄດ້ຈັດຂຶ້ນທີ່ Vladivostok, ຣັດເຊຍ ໃນຫົວຂໍ້: "ປະສົມປະສານບັນດາຈຸດແຂງ ເພື່ອສ້າງທ່າແຮງໃໝ່ໃນຕາເວັນອອກໄກ ໃນປີ 2030 (Far East 2030. Combining Strengths to Create New Potential)", ມີຜູ້ເຂົ້າຮ່ວມ 6,000 ກວ່າຄົນ ຈາກ 76 ປະເທດ ແລະ ເຂດແຄວ້ນ. ກອງປະຊຸມດັ່ງກ່າວ ເນັ້ນເຖິງການຮ່ວມມືລະຫວ່າງປະເທດດ້ານວິທະຍາສາດ, ເທັກໂນໂລຊີ, ການຂົນສົ່ງ ແລະ ການສື່ສານ ໂດຍການຊຸກຍູ້ຜູ້ປະກອບການຣຸ່ນໃໝ່. ພ້ອມກັນນັ້ນ, ຣັດເຊຍ ກ່າວວ່າຈະຂະຫຍາຍການພົວພັນຮ່ວມມືກັບອາຊຽນ ແລະ ບັນດາປະເທດໃນອາຊຽນ ແລະ ທຸກປະເທດທົ່ວໂລກ ທີ່ເປັນເພື່ອນມິດຣັດເຊຍ.

**ຂໍ້ຂັດແຍ່ງອູແກຣນ-ຣັດເຊຍ**: ວັນທີ 01/09/2024, ອູແກຣນ ໄດ້ໂຈມຕີແຄວ້ນ Belgorod ຂອງຣັດເຊຍ ເຮັດໃຫ້ອາຄານ 24 ແຫ່ງ, ລົດ 25 ຄັນ ໄດ້ຮັບຄວາມເສຍຫາຍ, ມີຜູ້ບາດເຈັບ 11 ຄົນ. ສ່ວນສະຖານະການໃນແຄວ້ນຄຸດ (Kursk) ຂອງຣັດເຊຍ ຍັງມີການປະທະກັນຢ່າງໜັກ, ແຕ່ເຮັດໃຫ້ອູແກຣນ ສູນເສຍທະຫານ 7,800 ຄົນ, ລົດຖັງ 75 ຄັນ ແລະ ລົດຫຸ້ມເກາະຫຼາຍກວ່າ 500 ຄັນ ນັບແຕ່ວັນທີ 6/8/2024 ເປັນຕົ້ນມາ. ທ່ານ ປູຕິນ, ປະທານາທິບໍດີຣັດເຊຍ ໄດ້ກ່າວວ່າ ການຮຸກຮານແຄວ້ນຄຸດຂອງຣັດເຊຍ ບໍ່ສາມາດຢຸດຣັດເຊຍໃນພາກພື້ນ Donbass ທາງພາກຕາເວັນອອກຂອງອູແກຣນໄດ້, ຍິ່ງເຮັດໃຫ້ຣັດເຊຍເຂັ້ມແຂງ ໃນພາກພື້ນດັ່ງກ່າວ. ວັນທີ 1/9/2024, ຣັດເຊຍ ໄດ້ຍິງໂດຣນ 158 ລຳ ຂອງອູແກຣນ ຕົກ; ກອງທັບຣັດເຊຍ ຍັງໄດ້ໂຈມຕີເປົ້າໝາຍຫຼາຍແຫ່ງທົ່ວອູແກຣນ ໂດຍສະເພາະແມ່ນສະຖານທີ່ພະລັງງານ ແລະ ອຸດສາຫະກຳປ້ອງກັນປະເທດ, ໃນນັ້ນ ແມ່ນໄດ້ໂຈມຕີໂຮງຮຽນການສື່ສານ ແລະ ເທັກໂນໂລຊີ ທາງທະຫານຂອງອູແກຣນ ໃນເມືອງ Poltava, ທາງພາກກາງຂອງອູແກຣນ ໃນວັນທີ 3/9/2024 ຜ່ານມາ ເຮັດໃຫ້ມີຜູ້ບາດເຈັບ 250 ຄົນ, ເສຍຊີວິດ 50 ຄົນ. ສຳລັບການຊ່ວຍເຫຼືອອູແກຣນ, ໃນລະຫວ່າງການຢ້ຽມຢາມອູແກຣນ ຂອງ ທ່ານ Simon Harris, ນາຍົກລັດຖະມົນຕີອຽກລັງ ໃນວັນທີ 4/9/2024 ໄດ້ປະກາດຈະໃຫ້ການຊ່ວຍເຫຼືອອູແກຣນ ມູນຄ່າ 36 ລ້ານເອີໂຣ. ວັນທີ 2/9/2024, ໂຣເມນີ ໄດ້ຜ່ານຮ່າງກົດໝາຍວ່າດ້ວຍການຖ່າຍໂອນລະບົບປ້ອງກັນໄພທາງອາກາດ Patriot ໃຫ້ກັບອູແກຣນ; ຊູແອັດ ກໍໄດ້ປະກາດຈະຊ່ວຍອູແກຣນ ເປັນຄັ້ງທີ 17 ມູນຄ່າ 443 ລ້ານໂດລາສະຫະລັດ. ສ່ວນທ່ານ Jeo Biden ກ່າວວ່າ: ຈະໃຫ້ການຊ່ວຍເຫຼືອອູແກຣນ ເພີ່ມຕື່ມ 8 ຕື້ໂດລາ. ທ່ານ David Lammy, ລັດຖະມົນຕີຕ່າງປະເທດອັງກິດ ຈະສະໜັບສະໜູນອູແກຣນ ປີລະ 3,99 ຕື້ໂດລາ ຈົນກວ່າຂໍ້ຂັດແຍ່ງຈະສິ້ນສຸດ. ແຕ່ອູແກຣນ, ຍັງຕ້ອງການງົບປະມານຈຳນວນຫຼາຍ, ຊຶ່ງທ່ານ Vladimir Zelensky, ປະທານາທິບໍດີອູແກຣນ ໄດ້ຮຽກຮ້ອງໃຫ້ບັນດາປະເທດສະມາຊິກນາໂຕ້ ສືບຕໍ່ສົ່ງອາວຸດໃຫ້ອູແກຣນ ແລະ ກົດດັນຣັດເຊຍ ຍອມຮັບເງື່ອນໄຂສັນຕິພາບຂອງອູແກຣນ; ທັງຮຽກຮ້ອງໃຫ້ບັນດາປະເທດຕາເວັນຕົກ ສະໜັບສະໜູນການຜະລິດອາວຸດໂດຣນ ແລະ ລູກສອນໄຟ ຮ່ວມກັນ ຢູ່ໃນດິນແດນຂອງອູແກຣນ. ນອກຈາກນັ້ນ, ການເມືອງພາຍໃນຂອງອູແກຣນກຳລັງມີບັນຫາ ໄດ້ມີການປັບປຸງລັດຖະບານ, ໃນນັ້ນ ມີລັດຖະມົນຕີ 6 ທ່ານ ຍື່ນໃບລາອອກ. ຂະນະທີ່ ຣັດເຊຍ ໄດ້ຝຶກຊ້ອມຮົບທາງທະເລໃນມະຫາສະໝຸດປາຊີຟິກ, ອາກຕິກ, ທະເລເມດິແຕຣາເນ, ທະເລກາສະປຽນ ແລະ ບານຕິກ (Russia's Ocean 24 naval excercise) ໃນວັນທີ 10-16/9/2024, ປະກອບມີເຄື່ອງບິນ 120 ລຳ, ອາວຸດຍຸດໂທປະກອນອື່ນໆອີກ 7,000 ໜ່ວຍ ແລະ ມີທະຫານເຂົ້າຮ່ວມ 90,000 ຄົນ ແລະ ໃນວັນທີ 16/9/2024, ທ່ານ Vladimir Putin ໄດ້ລົງນາມດຳລັດວ່າດ້ວຍການເພີ່ມຈຳນວນບຸກຄະລາກອນໃນກອງທັບລັດເຊຍ ຈາກ 2,2 ລ້ານຄົນ, ໃນນັ້ນ ເປັນທະຫານ 1,3 ລ້ານຄົນ ໃນປີ 2023 ຂຶ້ນເປັນ 2,4 ລ້ານຄົນ, ໃນນັ້ນເປັນທະຫານຈຳນວນ 1,5 ລ້ານຄົນ ໃນປີ 2025.

**ການເມືອງຝຣັ່ງ:** ພາຍຫຼັງ ທ່ານ ມາຄຣົງ ໄດ້ປະຕິເສດ ການສະເໜີຊື່ ທ່ານ ນາງ Lucie Castets ຈາກກຸ່ມພັກແນວໜ້າປະຊານິຍົມໃໝ່ ທີ່ໄດ້ບ່ອນນັ່ງຫຼາຍກວ່າໝູ່ໃນການເລືອກຕັ້ງສະພາຕົ້ນເດືອນ 7/2024 ຜ່ານມາ ເປັນນາຍົກລັດຖະມົນຕີ ແລະ ເລືອກ ທ່ານ Michel Barnier, ນັກການເມືອງສາຍກາງ-ຂວາ ເປັນນາຍົກລັດຖະມົນຕີ, ບັນດາພັກຝ່າຍຊ້າຍ ແລະ ຜູ້ປະທ້ວງຫຼາຍແສນຄົນທົ່ວປະເທດ ໄດ້ປະທ້ວງບໍ່ເຫັນດີ ແລະ ປະນາມ ທ່ານ ມາຄຣົງ ທີ່ບໍ່ສົນໃຈຕໍ່ຜົນການເລືອກຕັ້ງ, ໂດຍຮຽກຮ້ອງໃຫ້ທ່ານລາອອກຈາກຕຳແໜ່ງປະທານາທິບໍດີ.

### 3. ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ວັນທີ 1/9/2024, ປະຊາຊົນອິດສະຣາແອນ 7 ແສນຄົນ ໄດ້ປະທ້ວງໃນເມືອງ Tel Aviv ແລະ ເມືອງອື່ນໆ ທົ່ວປະເທດ ຮຽກຮ້ອງໃຫ້ຢຸດຍິງໃນກາຊາ, ກາຍເປັນຄວາມຮຸນແຮງ, ມີການປະທະກັບເຈົ້າໜ້າທີ່ ເຮັດໃຫ້ມີຜູ້ຖືກຈັບ 35 ຄົນ; ຢູ່ນະຄອນຫຼວງເບີລິນ ຂອງເຢຍລະມັນ, ນະຄອນນິວຢອກຂອງອາເມຣິກາ ກໍມີການປະທ້ວງຮຽກຮ້ອງໃຫ້ຢຸດຍິງໃນກາຊາ. ແຕ່ນາຍົກລັດຖະມົນຕີອິດສະຣາແອນ ບໍ່ໃສ່ໃຈຕໍ່ການປະທ້ວງໃດໆ, ສືບຕໍ່ໂຈມຕີເຂດກາຊາ ເພື່ອກວາດລ້າງກຸ່ມຮາມາສ ແຕ່ຜູ້ຖືກເຄາະຮ້າຍ ແມ່ນປະຊາຊົນປາແລັດສະຕິນ ທີ່ອາໄສໃນເຂດດັ່ງກ່າວ. ມາຮອດວັນທີ 1/9/2024 ມີປະຊາຊົນປາແລັດສະຕິນຜູ້ເສຍຊີວິດ ໃນເຂດກາຊາ 40,738 ຄົນ, ບາດເຈັບ 94,154 ນັບແຕ່ເກີດຄວາມຂັດແຍ່ງ ວັນທີ 7/10/2023 ເປັນຕົ້ນມາ. ນອກຈາກຄວາມຂັດແຍ່ງໃນເຂດກາຊາລະຫວ່າງອິດສະຣາແອນ ກັບກຸ່ມຮາມາສແລ້ວ, ການປະທະກັນລະຫວ່າງອິດສະຣາແອນກັບກຸ່ມຮິດບອນເລາະ ໃນລີບັງຮຸນແຮງຂຶ້ນ, ອິດສະຣາແອນ ໄດ້ເຄື່ອນຍ້າຍກຳລັງທະຫານຈາກກາຊາ ມາຍັງເຂດຊາຍແດນລະຫວ່າງ ອິດສະຣາແອນ ແລະ ລີບັງ ຫຼາຍ ກວ່າ 10,000 ຄົນ ແລະ ໄດ້ແຈກອາວຸດປືນໄຣເຟີລ (Rifle) ຈຳນວນ 9,000 ກະບອກໃຫ້ກັບ ປະຊາຊົນຂອງຕົນທີ່ຢູ່ພາກພື້ນດັ່ງກ່າວ ໂດຍໃຫ້ເຫດຜົນວ່າ ໄວ້ໃຊ້ປ້ອງກັນໂຕເອງ ແລະ ໄດ້ເລີ່ມໂຈມຕີກຸ່ມຮິດບອນເລາະ ຫຼາຍກວ່າ 650 ແຫ່ງ ທົ່ວປະເທດລີບັງ ໃນວັນທີ 23/9/2024 ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 558 ຄົນ ແລະ ບາດເຈັບ 1.645 ຄົນ ລວມທັງທ່ານ Ali Karaki, ຜູ້ນຳຫອງລູກສອນໄຟຂອງກຸ່ມຮິດບອນເລາະ, ປະຊາຊົນຕ້ອງອົບພະຍົບອອກຈາກພື້ນທີ່ທາງພາກໃຕ້ຂອງ ລີບັງ. ກຸ່ມຮິດບອນເລາະ ໄດ້ຕອບໂຕ້ດ້ວຍການຍິງລູກສອນໄຟໃສ່ກອງທັບອາກາດຂອງອິດສະຣາແອນ, ສະໜາມບິນ Megiddo ຢູ່ເມືອງ Afula, ຖານທັບອາກາດ Ramat David ຢູ່ເມືອງ Haifa ແລະ ໂຮງງານຜະລິດລະເບີດໃນເມືອງ Zikhon Ya'akov ຫ່າງຈາກຊາຍແດນປະມານ 60 ກິໂລແມັດ. ຂະນະທີ່ ຜູ້ບັນຊາການທະຫານສູງສຸດຂອງອິດສະຣາແອນ ກ່າວວ່າ ກອງທັບຂອງອິດສະຣາແອນ, ກຳລັງກຽມພ້ອມສຳລັບປະຕິບັດການພາກພື້ນດິນຂອງ ລີບັງ. ຕໍ່ສະຖານະການທີ່ເກີດຂຶ້ນ, ອາເມຣິກາ ແລະ ບັນດາປະເທດສະຫະພາບເອີຣົບ ໄດ້ສະເໜີແຜນຢຸດຍິງລະຫວ່າງອິດສະຣາແອນ ແລະ ກຸ່ມຮິດສະບອນເລາະ ເປັນເວລາ 21 ວັນ, ແຕ່ຖືກອິດສະຣາແອນປະຕິເສດ, ຫຼາຍຝ່າຍກັງວົນວ່າ ຄວາມຂັດແຍ່ງຈະກາຍເປັນສົງຄາມເຕັມຮູບແບບ ຖ້າອິດສະຣາແອນໂຈມຕີທາງພາກພື້ນຂອງລີບັງ; ຫຼາຍປະເທດໄດ້ເຕືອນໃຫ້ປະຊາຊົນຂອງຕົນເອງອອກຈາກລີບັງເຊັ່ນ: ຣັດເຊຍ, ມາເລເຊຍສ່ວນຜູ້ນຳສູງສຸດຂອງອີຣານ ໄດ້ຮຽກຮ້ອງໃຫ້ບັນດາປະເທດມຸດສະລິມ ທົ່ວໂລກຕັດສາຍພົວພັນກັບອິດສະຣາແອນ ເພາະການກະທຳຂອງອິດສະຣາແອນເປັນການຂ້າລ້າງເຜົ່າພັນ. ລັດຖະມົນຕີຕ່າງປະເທດ ລີບັງກ່າວວ່າ ປັດຈຸບັນ ລີບັງກຳລັງປະເຊີນກັບບັນຫາດ້ານມະນຸດສະທຳ ປະຊາຊົນລີບັງຫຼາຍກວ່າ 90,000 ຄົນ ຈຳເປັນຕ້ອງອົບພະຍົບໄປເຂດປອດໄພ.

## II.ການເຄື່ອນໄຫວຂອງ ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ລາວ-ຫວຽດນາມ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ແລະ ຄວາມສາມັກຄີພິເສດ



ວັນທີ 16/9/2024, ສະຫາຍ ທອງສະຫວັນ ພົມວິຫານ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດການຢ້ຽມຢາມລັດຖະກິດ ສສ ຫວຽດນາມ ຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ປະທານປະເທດ ໃນລະຫວ່າງ ວັນທີ 10-13/9/2024, ເປັນການຢ້ຽມຢາມ ທີ່ມີຄວາມໝາຍສາຄັນເປັນຢ່າງຍິ່ງ ຊຶ່ງ ສະຫາຍ ທອງລຸນ ສີສຸລິດ ໄດ້ພົບປະສອງຝ່າຍກັບສະຫາຍ ໂຕເລີມ ເລຂາທິການໃຫຍ່ ປະທານປະເທດ; ພົບປະກັບ ສະຫາຍ ຟ້າມມິງຈິງ ນາຍົກລັດຖະ ມົນຕີ; ສະຫາຍ ເຈິນແທັງເໝິ້ນ ປະທານສະພາແຫ່ງຊາດ; ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ຄະນະກຳມະການແນວໂຮມປະເທດຊາດຫວຽດນາມ ແລະ ສະມາຄົມມິດຕະພາບຫວຽດນາມ-ລາວ

ຂັ້ນສູນກາງ; ພົບປະກັບອະດີດການນຳຂັ້ນສູງ ຂອງ ສສ ຫວຽດນາມ ແລະ ພົບປະກັບອະດີດທະຫານອາສາສະໝັກ, ຊ່ຽວຊານ, ນັກສຶກສາຫວຽດນາມ ຢູ່ ສປປ ລາວ, ຕົວແທນຄົນໄວໜຸ່ມຫວຽດນາມ ແລະ ນັກສຶກສາລາວທີ່ກຳລັງສຶກສາ ຢູ່ ສສ ຫວຽດນາມ ແລະ ຍັງໄດ້ຢ້ຽມຢາມບາງພື້ນຖານເສດຖະກິດ ແລະ ວັດທະນະທຳ, ປະຫວັດສາດ ຢູ່ນະຄອນໂຮ່ຈິມິນ; ເປັນການຢືນຢັນເຖິງການສືບຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໂດຍ ປະທານ ໂຮ່ຈິມິນ ຜູ້ຍິ່ງໃຫຍ່ ຮ່ວມກັບປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ທີ່ເຄົາລົບຮັກ ໃຫ້ນັບມື້ໄດ້ຮັບການເສີມຂະຫຍາຍຂຶ້ນສູ່ລະດັບໃໝ່. ການພົວພັນທາງດ້ານການເມືອງຂອງສອງປະເທດຖືເປັນພື້ນຖານຫຼັກໃນການກຳນົດແນວທາງການພົວພັນຮ່ວມມືລວມລະຫວ່າງສອງປະເທດ, ຊຶ່ງສອງຝ່າຍໄດ້ເອົາໃຈໃສ່ການຮ່ວມມືກັນຢ່າງແໜ້ນແຟ້ນໃນບັນດາບັນຫາຍຸດທະສາດ, ແນວທາງ ແລະ ນະໂຍບາຍທີ່ກ່ຽວຂ້ອງເຖິງຄວາມໝັ້ນຄົງ ແລະ ການພັດທະນາຂອງແຕ່ລະປະເທດ; ຮັກສາການຢ້ຽມຢາມ ແລະ ການພົບປະລະຫວ່າງການນຳຂັ້ນສູງຂອງສອງພັກ ແລະ ສອງລັດ ໃນຫຼາຍຮູບຫຼາຍແບບ ຊຶ່ງເປັນແກ່ນສານໃນການກຳນົດທິດໃຫ້ແກ່ການພົວພັນຮ່ວມມືຂອງສອງປະເທດ.

2) ຫົວໜ້າ ຄຕພ ຕ້ອນຮັບ ອະດີດທະຫານອາສາສະໝັກ-ຊ່ຽວຊານ ຫວຽດນາມ




ວັນທີ 23/9/2024, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ) ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ພົ.ວ ຮວົ່ງ ດັກ ເຮືອງ, ຫົວໜ້າຄະນະຕິດຕໍ່ປະສານງານທົ່ວປະເທດອະດີດທະຫານອາສາສະໝັກ-ຊ່ຽວຊານ ຫວຽດນາມ ຊ່ວຍເຫຼືອການປະຕິວັດລາວ ພ້ອມດ້ວຍຄະນະ. ການຢ້ຽມຢາມໃນຄັ້ງນີ້ ແມ່ນມີຄວາມໝາຍສຳຄັນຫຼາຍ, ເຊິ່ງໄດ້ຈັດຂຶ້ນທ່າມກາງບັນຍາກາດການສະເຫຼີມສະຫຼອງວັນສ້າງຕັ້ງ ຄະນະຕິດຕໍ່ປະສານງານທົ່ວປະເທດ ອະດີດທະຫານອາສາໝັກ ແລະ ຊ່ຽວຊານການທະຫານຫວຽດນາມ ຊ່ວຍເຫຼືອລາວ ຄົບຮອບ 75 ປີ ( 30/10/1949-30/10/2024 ), ຢ້ຽມຢາມໃນຄັ້ງນີ້ ຈະເປັນການຢໍ້າຄືນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ໜຶ່ງບໍ່ມີສອງ, ທັງເປັນການສຶກສາອົບຮົມມູນເຊື້ອແຫ່ງຄວາມສາມັກຄີຮ່ວມສຳພັນສູ້ຮົບລະຫວ່າງສອງຊາດລາວ-ຫວຽດນາມ ໃຫ້ຄົນຮຸ່ນໜຸ່ມໄດ້ຮຽນຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ. ສອງຝ່າຍຕ່າງກໍ່ໄດ້ຢືນຢັນຄືນ, ພ້ອມຈະສືບຕໍ່ເສີມຂະຫຍາຍ, ປົກປັກຮັກສາ ແລະ ເພີ່ມພູນຄູນສ້າງສາຍພົວພັນພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ລາວ - ຫວຽດນາມ ໃຫ້ຈະເລີນງອກງາມ ນຳເອົາຜົນປະໂຫຍດຕົວຈິງ ຢ່າງຫຼວງຫຼາຍມາສູ່ປະຊາຊົນສອງຊາດ, ຊຸກຍູ້ການພົວພັນຮ່ວມມື ດ້ານເສດຖະກິດ-ການຄ້າ ແລະ ການລົງທຶນ, ການສຶກສາ ແລະ ອື່ນໆ.

3) ທີ່ວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ແລະ ເຮັດວຽກຢູ່ ຍີ່ປຸ່ນ




ວັນທີ 26-29/8/2024, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດຍີ່ປຸ່ນ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບທີ່ມີມູນເຊື້ອອັນດີງາມຂອງສອງຊາດ ແລະ ກະກຽມໃຫ້ແກ່ສະເຫຼີມສະຫຼອງ 70 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດລະຫວ່າງ ສປປ ລາວ ແລະ ຍີ່ປຸ່ນ, 10 ປີ ແຫ່ງການຍົກລະດັບ ການພົວພັນເປັນຄູ່ຮ່ວມຍຸດທະສາດ ໃນປີ 2025 ເສີມຂະຫຍາຍສາຍພົວພັນການທູດດ້ານພັກ ແລະ ການທູດປະຊາຊົນ ລະຫວ່າງ ສປປ ລາວ ກັບ ຍີ່ປຸ່ນ. ສອງຝ່າຍໄດ້ຕີລາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອຍາວນານ ລະຫວ່າງ ລາວ ແລະ ຍີ່ປຸ່ນ; ສອງຝ່າຍເຫັນດີເປັນເອກະພາບກັນໃນການສືບຕໍ່ເສີມຂະຫຍາຍສາຍພົວພັນການທູດດ້ານພັກ ແລະ ການທູດປະຊາຊົນ ເພື່ອຊຸກຍູ້ການຮ່ວມມື ລະຫວ່າງ ສອງລັດຖະບານ, ສິ່ງເສີມຄວາມເຂົ້າໃຈ ລະຫວ່າງ ປະຊາຊົນສອງຊາດ, ຊຸກຍູ້ການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ພະລັງງານສະອາດ,ການທ່ອງທ່ຽວ, ພ້ອມທັງຊອກຫາທ່າແຮງບົ່ມຊ້ອນຕ່າງໆໃຫ້ຫຼາຍຂຶ້ນຕື່ມ ໃນການຮ່ວມມືທີ່ ສອງຝ່າຍ ມີຄວາມສົນໃຈ ແລະ ທ່າແຮງ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຍີ່ປຸ່ນ. ຝ່າຍລາວ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈມາຍັງ ພັກ, ລັດ ແລະ ປະຊາຊົນຍີ່ປຸ່ນ ຕໍ່ການຮ່ວມມື ແລະ ຊ່ວຍເຫຼືອ ສປປ ລາວ ໂດຍຜ່ານບັນດາໂຄງການຮ່ວມມື ແລະ ຊ່ວຍເຫຼືອຕ່າງໆ ໃນໄລຍະຜ່ານມາ ເປັນຕົ້ນແມ່ນການພັດທະນາຊັບພະຍາກອນມະນຸດ, ການເກັບກູ້ລະເບີດບໍ່ທັນແຕກ (UXO), ການກໍ່ສ້າງພື້ນຖານໂຄງລ່າງ, ກະສິກຳ-ປ່າໄມ້, ການຫຼຸດຜ່ອນຄວາມທຸກຍາກ, ດ້ານມະນຸດສະທຳ, ການສິ່ງຊ່ຽວຊານ ແລະ ອາສາສະໝັກຍີ່ປຸ່ນມາຊ່ວຍເຫຼືອລາວ ແລະ ອື່ນໆ.

4) ກອງປະຊຸມທາບທາມເປີດກວ້າງ ຕໍ່ຮ່າງຂໍ້ກຳນົດຂອງກົມການເມືອງສູນກາງພັກ ຕໍ່ວຽກງານຕ່າງປະເທດ



ໃນວັນທີ 24/9/2024, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມທາບທາມເປີດກວ້າງຂັ້ນສູນກາງ ເພື່ອປຶກສາຫາລື ແລກປ່ຽນຄຳຄິດຄຳເຫັນ ຕໍ່ຮ່າງຂໍ້ກຳນົດຂອງກົມການເມືອງສູນກາງພັກ ວ່າດ້ວຍການຄຸ້ມຄອງການເຄື່ອນໄຫວວຽກງານຕ່າງປະເທດ ໂດຍການເປັນປະທານ ຂອງ ສະຫາຍ ວາລະໄຊ ເລັ້ງສະຫວັດ, ກຳມະການຄະນະພັກ, ປະທານກວດກາພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີຜູ້ຕາງໜ້າຈາກ 12 ອົງການຈັດຕັ້ງຂອງພັກຂັ້ນສູນກາງ ແລະ ພະນັກງານພາຍໃນ ຄຕພ ເຂົ້າຮ່ວມ 50 ກວ່າສະຫາຍ. ກອງປະຊຸມ ໄດ້

ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ໃສ່ຂໍ້ກຳນົດຂອງກົມການເມືອງດັ່ງກ່າວ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ, ຂໍ້ກຳນົດສະບັບນີ້ ປະກອບດ້ວຍ 4 ພາກ, 15 ມາດຕາ ເຊິ່ງຈະເປັນນິຕິກຳໃຫ້ແກ່ການຈັດຕັ້ງເຄື່ອນໄຫວວຽກງານການຕ່າງປະເທດໃນສາຍພັກ ແຕ່ສູນກາງ ຮອດທ້ອງຖິ່ນ ໃຫ້ເອກະພາບຜ່ານປະຕູດຽວ, ສອດຄ່ອງກັບສະພາບການໃນແຕ່ລະໄລຍະ, ທັງເປັນການເຊີດຊູບົດບາດຂອງພັກ-ລັດ ສປປ ລາວ ໃນເວທີພາກພື້ນ ແລະ ສາກົນ.

5) ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າອວຍພອນວັນຊາດ ຫວຽດນາມ



ໃນວັນທີ 29/9/2024, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍພະນັກງານຫຼັກແຫຼ່ງ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ເຂົ້າອວຍພອນສະຖານເອກອັກຄະລັດຖະທູດ ສສ.ຫວຽດນາມ ປະຈຳ ລາວ, ເນື່ອງໃນໂອກາດ ວັນລະນຶກການປະຕິວັດເດືອນສິງຫາ ຄົບຮອບ 79 ປີ (19/8/1945-19/8/2024) ແລະ ວັນສະຖາປະນາ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 79 ປີ (2/9/1945-2/9/2024). ໃນໂອກາດນີ້, ສະຫາຍ ວາລະໄຊ ເລັ່ງສະຫວັດ, ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດ ແລະ ຜົນງານທີ່ໃຫຍ່ຫຼວງ, ຮອບດ້ານຂອງປະຊາຊົນ ຫວຽດນາມ ຍາດມາໄດ້ຕະຫລອດໄລຍະ 79 ປີ ຜ່ານມາ ພາຍໃຕ້ການນຳພາອັນຖືກຕ້ອງສະຫລາດສ່ອງໃສ ຂອງພັກກອມມູນິດ ຫວຽດນາມ ອັນໄດ້ເຮັດໃຫ້ ສສ ຫວຽດນາມ ສືບຕໍ່ມີສະຖຽນລະພາບ ທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ; ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ການພົວພັນສາກົນໄດ້ເປີດກວ້າງ, ອັນໄດ້ເຮັດໃຫ້ບົດບາດ, ອິດທິພົນຂອງຫວຽດນາມ ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

6) ຮອງຫົວໜ້າ ຄຕພ ອວຍພອນ ສະຖານທູດ ສປ ຈີນ ໃນໂອກາດວັນຊາດ ສປ ຈີນ



ວັນທີ 27/9/2024, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ນຳພາຄະນະ ເຂົ້າອວຍພອນ ແລະ ພົບປະກັບ ສະຫາຍ ນາງ ຟາງ ຫົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປ ຈີນ ປະຈຳ ສປປ ລາວ ເນື່ອງໃນໂອກາດວັນສະຖາປະນາ ສປ.ຈີນ ຄົບຮອບ 75 ປີ. ໃນໂອກາດນີ້, ສອງຝ່າຍໄດ້ຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ກໍຄື ການພົວພັນປະສານສົມທົບກັນ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ແລະ ສະຖານທູດ ສປ ຈີນ ເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃຫ້ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ. ໂອກາດນີ້, ສະຫາຍ ວາລະໄຊ ເລັ່ງສະຫວັດ ຍັງໄດ້ຕາງໜ້າມອບ ສານອວຍພອນ ຈາກ ສະຫາຍ

ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ເຖິງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປ ຈີນ ແລະ ຈາກ ສະຫາຍ ທອງສະວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ເຖິງ ສະຫາຍ ຫຼິວ ຈ້ຽນຊາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ.

**7) ຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ແລະ ເຮັດວຽກຢູ່ ຣາຊະອານາຈັກກຳປູເຈຍ**



ຄະນະຜູ້ແທນ ຄະນະພົວພັນຕ່າງປະເທດສູນກາງ ພັກປະຊາຊົນ ປະຕິວັດລາວ ນຳໂດຍ ທ່ານ ອາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ ຣາຊະອານາຈັກກຳປູເຈຍ ແຕ່ວັນທີ 29/8/-1/9/2024. ໂອກາດດັ່ງກ່າວ, ໄດ້ມີການພົບປະການນຳຂັ້ນສູງຂອງພັກປະຊາຊົນ ກຳປູເຈຍ ແລະ ເຮັດວຽກກັບ ທ່ານ ແກັມ ສິມບັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງ ພັກປະຊາຊົນ ກຳປູເຈຍ, ສອງຝ່າຍ ໄດ້ແຈ້ງໃຫ້ກັນຊາບ ສະພາບການພົ້ນເດັ່ນພາຍໃນຂອງ 2 ພັກ, 2 ປະເທດ, ແລກປ່ຽນທັດສະນະ ຕໍ່ບັນຫາພົ້ນເດັ່ນສາກົນ, ພາກພື້ນ ແລະ ປຶກສາຫາລືກ່ຽວກັບການພົວພັນຮ່ວມມືສອງຝ່າຍ ແລະ ເອກະພາບກັນກ່ຽວກັບ ທິດທາງການຮ່ວມມືໃນຕໍ່ໜ້າ. ນອກຈາກນີ້, ຄະນະ ຍັງໄດ້ໄປ ພົບປະເຮັດວຽກກັບ ເລຂາພັກແຂວງ, ຄະນະນຳແຂວງ ສຽມຣຽບ ແລະ ທັດສະນະສຶກສາ ສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດຈຳນວນໜຶ່ງຢູ່ ແຂວງ ສຽມລຽບ ອີກດ້ວຍ.

**8) ຮອງຫົວໜ້າ ຄຕພ ພົບປະກັບ ຫົວໜ້າພົວພັນຕ່າງປະເທດສູນກາງພັກສັງຄົມນິຍົມເອກະພາບເວເນຊູເອລາ**




ວັນທີ 05/9/2024, ສະຫາຍ ອາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ພົບປະຜ່ານລະບົບວິດີໂອທາງໄກກັບ ສະຫາຍ ຣັງເດີ ອິດສມາເອນ ເປຢາ ຣາມີເຣດ, ກຳມະການສູນກາງພັກ, ຫົວໜ້າພົວພັນຕ່າງປະເທດສູນກາງພັກສັງຄົມນິຍົມເອກະພາບເວເນຊູເອລາ. ສອງຝ່າຍ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືສອງຝ່າຍ ໃນໄລຍະຜ່ານມາ ແລະ ປຶກສາຫາລື ກ່ຽວກັບ ທິດທາງໃນການເສີມຂະຫຍາຍສາຍພົວພັນຮ່ວມມືໃນຕໍ່ໜ້າ ພ້ອມໄດ້ແລກປ່ຽນທັດສະນະກ່ຽວກັບບັນຫາພາກພື້ນ ແລະ ສາກົນ ທີ່ທັງສອງຝ່າຍມີຄວາມສົນໃຈ.

### 9) ຄຕພ ປາຖະກະຖາ ວັນສຳຄັນຂອງຊາດ ແລະ ການສ້າງຕັ້ງສາຍພົວພັນລາວ-ຫວຽດນາມ



ວັນທີ 16/9/2024, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດພິທີປະຖະກະຖາ ເອກະສານສຳຄັນ ຄື: ວັນຍຶດອຳນາດຄົບຮອບ 23/8/1945 ແລະ 23/8/1975 ; ວັນເຊັນສົນທິສັນຍາມິດຕະພາບ-ການຮ່ວມມືລາວ-ຫວຽດນາມຄົບຮອບ 47 ປີ (18/07/1977-18/07/2024) ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 62 ປີ (05/09/1962-05/09/2024). ເຜີຍແຜ່ໂດຍ ສະຫາຍ ບຸນຍາເດດ ໄຊຍະວົງ, ກຳມະການຄະນະພັກ , ຫົວໜ້າຫ້ອງການ ຄຕພ ແລະ ສະຫາຍ ປອ.ສະເຫຼີມໄຊ ທະທົງສັກ, ກຳມະການຄະນະພັກ, ຫົວໜ້າກົມ ອາຊີ-ປາຊີຟິກ ແລະ ອາຟຣິກາ; ໄດ້ຍົກໃຫ້ເຫັນເຖິງປະຫວັດຄວາມເປັນມາ ແລະ ຄວາມໝາຍຄວາມສຳຄັນຂອງວັນຍຶດອຳນາດ 23 ສິງຫາ, ຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນຂອງປວງຊົນທັງຊາດ. ພ້ອມນີ້, ຍັງໄດ້ຍົກໃຫ້ເຫັນເຖິງສາຍພົວພັນຮ່ວມມືຮອບດ້ານ ແລະ ຄວາມສາມັກຄີແບບພິເສດຂອງສອງປະເທດ ລາວ-ຫວຽດນາມ ອ້າຍນ້ອງ ຕະຫຼອດໄລຍະເວລາກວ່າເຄິ່ງສະຕະວັດ ແຫ່ງການຮ່ວມສຳພັນສູ້ຮົບຢ່າງມີໄຊ ແລະ ເຮັດໃຫ້ຄວາມຜູກພັນດ້ວຍໄມຕີຈິດອັນດູດດື່ມ ແລະ ຄວາມຮັກແພງເຊື່ອໝັ້ນຖານອ້າຍນ້ອງກາຍມາເປັນຄວາມສາມັກຄີແບບພິເສດຫາຍາກຈົນກາຍເປັນມໍລະດົກລວມອັນລ້ຳຄ່າຕະຫຼອດເຖິງປັດຈຸບັນ.

## III. ການເຄື່ອນໄຫວຂອງ ອົງການຈັດຕັ້ງມະຫາຊົນ ຄຕພ

### 1. ກຳມະບານຮາກຖານກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ ຈັດກອງປະຊຸມໃຫຍ່ ຄັ້ງທີ II



ວັນທີ 10/9/2024, ກຳມະບານຮາກຖານ ກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ(ຄຕພ) ໄດ້ດຳເນີນກອງປະຊຸມໃຫຍ່ ຄັ້ງທີ II ຂອງຕົນຂຶ້ນ; ກອງປະຊຸມໄດ້ຜ່ານບົດລາຍງານການເມືອງ, ແຜນການເຄື່ອນໄຫວໃນຕໍ່ໜ້າ ແລະ ຜ່ານບົດສຳຫຼວດການນຳພາຂອງ ຄະນະກຳມະບານຮາກຖານຊຸດເກົ່າ. ກອງປະຊຸມໄດ້ຮັບຟັງຄຳເຫັນຊີ້ນຳຈາກ ສະຫາຍ ວັງຮີ ເນັ່ງມົງວ່າງ, ຮັກສາການເລຂາໜ່ວຍພັກ ກົມ ຄຕພ ແລະ ສະຫາຍ ສິງຫານະຄອນ ສີຫາລາດ ຄະນະກຳມະບານ ຄຕພ; ກອງປະຊຸມຍັງໄດ້ເລືອກເອົາຄະນະກຳມະບານຮາກຖານຊຸດໃໝ່ ປະກອບມີ ສະຫາຍ ບຸນມາ ທິບພົນເລືອງ, ເປັນປະທານກຳມະບານຮາກຖານ; ສະຫາຍ ໄຊຍະວົງ ຂຽມຜາສຸກ, ເປັນຮອງປະທານກຳມະບານຮາກຖານ, ທັງເປັນປະທານກວດກາ ແລະ ສະຫາຍ ນາງ ອຸດາໄລ ລາຊະພົນ, ເປັນກຳມະການ ກຳມະບານຮາກຖານ.

**2. ກອງປະຊຸມໃຫຍ່ ຄັ້ງທີ II ກໍາມະບານຮາກຖານ ກົມເອີຣົບ-ອາເມຣິກາ, ຄະນະພົວພັນຕ່າງປະເທດສູນກາງພັກ**



ວັນທີ 11/9/2024, ໜ່ວຍກໍາມະບານຮາກຖານ ກົມເອີຣົບ-ອາເມຣິກາ (ອອ) ໄດ້ດໍາເນີນກອງປະຊຸມໃຫຍ່ສະມາຊິກກໍາມະບານ ຄັ້ງທີ II ຂຶ້ນ. ກອງປະຊຸມໄດ້ຜ່ານ ບົດລາຍງານການເມືອງ ແລະ ບົດສໍາຫຼວດການນໍາພາ ຂອງຄະນະໜ່ວຍກໍາມະບານຮາກຖານກົມ ອອ ສະໄໝທີ I, ເຊິ່ງໄດ້ຕີລາຄາຜົນສໍາເລັດ, ຈຸດດີ-ຈຸດຄົງຄ້າງ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ໃນການນໍາພາ-ຊີ້ນໍາວຽກງານກໍາມະບານຂອງກົມ ອອ ໃນໄລຍະ 5 ປີຜ່ານມາ ແລະ ທິດທາງຈຸດສຸມໃນໄລຍະ 5 ປີຕໍ່ໜ້າ. ທີ່ປະຊຸມເລືອກຕັ້ງເອົາຄະນະໜ່ວຍຊຸດໃໝ່ ປະກອບມີ 3 ສະຫາຍຄື: ສະຫາຍ ທິດສອນ ສະຫວັນ, ເປັນປະທານກໍາມະບານຮາກຖານ; ສະຫາຍ ແລ່ມໂບ້ ບຸນວົງໄຊ, ເປັນຮອງປະທານກໍາມະບານຮາກຖານ, ທັງເປັນປະທານກວດກາ ແລະ ສະຫາຍ ນ. ອານົງ ຄ້າທະວີ, ເປັນກໍາມະການ ກໍາມະບານຮາກຖານ.

**3. ກອງປະຊຸມໃຫຍ່ ຄັ້ງທີ II ກໍາມະບານຮາກຖານ ກົມການທູດປະຊາຊົນ, ຄະນະພົວພັນຕ່າງປະເທດສູນກາງພັກ**



ວັນທີ 16/9/2024, ໜ່ວຍກໍາມະບານຮາກຖານ ກົມການທູດປະຊາຊົນ ໄດ້ດໍາເນີນກອງປະຊຸມໃຫຍ່ສະມາຊິກກໍາມະບານ ຄັ້ງທີ II ຂຶ້ນ, ກອງປະຊຸມໄດ້ຮັບຟັງ ບົດລາຍງານການເມືອງ ແລະ ບົດສໍາຫຼວດການນໍາພາ ຂອງ ຄະນະໜ່ວຍກໍາມະບານຮາກຖານ ກົມການທູດປະຊາຊົນ ສະໄໝທີ I. ໃນໂອກາດນີ້, ກອງປະຊຸມໄດ້ຮັບຟັງຄໍາເຫັນຊີ້ນໍາຂອງ ສະຫາຍ ບຸນຍອງ ບຸດທະວົງ, ເລຂາໜ່ວຍພັກ, ຫົວໜ້າກົມການທູດປະຊາຊົນ ແລະ ສະຫາຍ ບຸນຍາເດດ ໄຊຍະວົງ, ກໍາມະການຄະນະພັກ, ຕາງໜ້າຄະນະບໍລິຫານງານສະຫະພັນກໍາມະບານ ຄຕພ. ກອງປະຊຸມຍັງໄດ້ເລືອກຕັ້ງເອົາຄະນະໜ່ວຍຊຸດໃໝ່ເຊິ່ງປະກອບມີ 3 ສະຫາຍຄື: ສະຫາຍ ພູສີ ແກ້ວສູນໄຊ, ເປັນປະທານກໍາມະບານຮາກຖານ; ສະຫາຍ ຄໍາມີ ຈັນທະວົງ, ເປັນຮອງປະທານກໍາມະບານຮາກຖານ, ທັງເປັນປະທານກວດກາ ແລະ ສະຫາຍ ນ. ມະນີລັດ ສາຍປະລິນຍາ, ເປັນກໍາມະການ ກໍາມະບານຮາກຖານ.